**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກຫວ້ານຫາງແຂ້




**ເອກະສານ ປະກອບການຝຶກອົບຮົມ 29:**

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

## ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 29:
# ແນະນຳເຕັກນິກການປູກຫວ້ານຫາງແຂ້

## ສາລະບານ

ລັກສະນະທົ່ວໄປ ....... 2
ຄຸນປະໂຫຍດ ....... 3
ແນວພັນ ....... 4
ອາກາດ ແລະດິນ ....... 4
ວິທີການຫວ່ານກ້າ ....... 4
ວິທີການປູກ ....... 5
ວິທີການເກັບກ່ຽວ ....... 6

# 7. ການເກັບກ່ຽວ

ຖ້າອາຍຸໄດ້ 4 ປີ ກໍ່ສາມາດເກັບກ່ຽວໃບໄດ້ແລ້ວ, ຊ່ວງໄລຍະການເກັບກ່ຽວຫ່າງກັນປະມານ 6_8 ອາທິດ, ວິທີການເກັບກ່ຽວໃຫ້ເອົາ 3_4 ໃບຕໍ່ຕົ້ນ.

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

## 6. ວິທີການປູກ

ໂດຍທົ່ວໄປແລ້ວຫວ້ານຫາງແຂ້ມັກສະພາບອາກາດແຫ້ງແລ້ງແຕ່ວ່າປູກໄດ້ໃນສະພາບອາກາດອົບອຸ່ນ, ຕ້ອງການນໍ້າພໍປະມານເທົ່ານັ້ນແລະສາມາດປູກໄດ້ໃນຮົ່ມຢູ່ໃນເຂດທີ່ມີແສງແດດຕະຫຼອດປີ.

ຄວນປູກຫວ້ານຫາງແຂ້ໃນລະດູແລ້ງຈະໄດ້ຜົນດີ ສ່ວນປະສົມຂອງດິນປະກອບດ້ວຍ ດິນຕົມ 1 ສ່ວນ, ຊາຍ 2 ສ່ວນ, ຝຸ່ນບົ່ມ, ຫີນແຮ່ ແລະ ປະສົມດ້ວຍກະດູກບົດຈຳນວນໜຶ່ງ. ເອົາສ່ວນປະສົມດັ່ງກ່າວ ໃສ່ໃນໂຖຫົດນໍ້າຄ່ອຍໆ ຈົນຕົ້ນຂອງມັນຕັ້ງໂຕໄດ້, ຖ້າເປັນລະດູຝົນການໃຫ້ນໍ້າ ຄວນອີງໃສ່ຄວາມຊຸ່ມຂອງດິນເປັນຫຼັກ ໃຫ້ສັງເກດເບິ່ງໜ້າດິນທີ່ແຫ້ງແລ້ງ ຈຶ່ງຄ່ອຍໃຫນໍ້າ ແຕ່ວ່າຖ້າໃນຊ່ວງເດືອນ 9 ຫາ ເດືອນ 3 ມີຄວາມຈຳເປັນຕ້ອງໃຫ້ນໍ້າເປັນປົກກະຕິ ເພື່ອປົກປ້ອງໃບບໍ່ໃຫ້ຫ່ຽວ ແຕ່ກົງກັນຂ້າມຖ້າໃຫ້ນໍ້າຫຼາຍຈະເຮັດໃຫ້ຕົ້ນເນົ່າ, ຮາກມີການຈະເລີນເຕີບໂຕດີຈະເຮັດໃຫ້ການດູດທາດອາຫານຈາກດິນໄດ້ດີຂຶ້ນ, ໃນລະດູຝົນຕົ້ນທີ່ໃຫຍ່ຂຶ້ນ ຄວນໃຫ້ມີການປ່ຽນຖ່າຍດິນຢູ່ທາງໜ້າຂອງໂຖ ເພາະດິນດັ່ງກ່າວຂາດທາດອາຫານ, ຖ້າສັງເກດເຫັນມີຮູຕ່າງໆເກີດຕາມໂຖ ແມ່ນບໍ່ໃຫ້ຖິ້ມເພາະວ່າແມ່ນຕົ້ນໜໍ່ຈະແທງຂຶ້ນມາຕາມຮູດັ່ງກ່າວ, ຖ້າຕົ້ນໜໍ່ອອກມາ ມີຄວາສູງປະມານ 2.5 _ 5 ຊັງຕີແມັດ ສາມາດນຳໄປຂະຫຍາຍພັນໄດ້ແລ້ວ. ການປູກຫວ້ານຫາງແຂ້ບໍ່ຈຳເປັນຈະປ່ຽນໂຖເລື້ອຍໆ ຖ້າປູກໃສ່ໂຖໃຫຍ່ກໍ່ຍິ່ງດີເພາະຈະມີທາດອາຫານພຽງພໍ, ເລີ່ມປູກຫາເກັບກ່ຽວໃຊ້ເວລາ 4 ປີ ໃນວົງຈອນຊີວິດມີອາຍຸປະມານ 12 ປີ.



# ຂໍ້ແນະນຳເຕັກນິກການປູກຫວ້ານຫາງແຂ້

## 1. ລັກສະນະທົ່ວໄປ

ຊື່ວິທະຍາສາດ: Aloe Vera (L) Burn.f.
ຊື່ສາມັນ: Aloe Vera
ຕະກຸນ: Liliaceae
ຊື່ພາສາລາວ: ຫວ້ານຫາງແຂ້

ຫວ້ານຫາງແຂ້ເປັນພືດພື້ນເມືອງ ທີ່ກຳເນີດໃນເຂດທະວີບ **ອາຟຣິກາໃຕ້** ປະຈຸບັນໄດ້ປູກແຜ່ຫຼາຍໃນທົ່ວໂລກ ຍົກເວັ້ນໃນເຂດທະເລຊາຍ, ເຂດທີ່ມີຝົນຕົກຫຼາຍ ແລະເຂດຮາບພຽງ ຊຶ່ງມີອາກາດໜາວເຢັນ, ສ່ວນຫຼາຍຈະເຕີບໃຫຍ່ໄດ້ດີໃນເຂດແຫ້ງແລ້ງ, ປະຈຸບັນມີການປູກຫຼາຍຢູ່ທົ່ວທະວີບ **ອາຟຣິກາ** ເປັນຕົ້ນແມ່ຢູ່ຕາມເຂດ **ເມດີເຕລານຽນ** ແລະເຂດ **ຄາລິບຽນ** ແລະໃນອີກຫຼາຍປະເທດໃນອາເມລິກາໃຕ້.

ຫວ້ານຫາງແຂ້ເປັນພືດທີ່ມີໃບແຫຼມສ້ວຍຍາວ, ເປັນພືດທີ່ບັນຈຸນໍ້າປະມານ 96 %, ເປັນພືດທີ່ມີຮາກຝອຍຫຼາຍ ເຊິ່ງຊ່ວຍໃນການຜະລິດໃບໃຫ້ໃຫຍ່ດີ, ແຕ່ລະຕົ້ນຈະມີ 12 _ 16 ໃບ, ຄວາມສູງປະມານ 45 _ 50 ຊັງຕີແມັດ, ໃບສີຂຽວອ່ອນອອບນໍ້າ ແລະມີໜາມຢູ່ຂອບໃບ ດອກມີສີເຫຼືອງຫາສີສົ້ມແກ່, ຊໍ່ດອກຍາວທະມານ 1 ແມັດ.

ດ້ວຍເຫດວ່າພືດຊະນິດນີ້ ສາມາດບັນເທົາອາການເຈັບປວດ ຂອງບາດແຜໄດ້ ຈຶ່ງມີອີກຊື່ໜຶ່ງວ່າ: ພືດແຫ່ງຄວາມອຳມະຕະ "The plat of

immortality" ຫວ້ານຫາງແຂ້ເປັນຢາປະກອບທີ່ສຳຄັນຂອງຢາພື້ນເມືອງຕະຫຼອດຈີນຢາຫຼວງ.

## 2. ຄຸນປະໂຫຍດ

ຊ່ວຍລະງັບຄວາມເຈັບປວດ ແລະຫຼຸດຜ່ອນການອັກເສບຄ້າຍຄືກັບ **ຢາແອສໄຟລິນ** ສາມາດບັນເທົາອາການບາດແຜຈາກນ້ຳຮ້ອນລວກ, ໄຟໄໝ້, ເປັນຢາປົວກະເພາະ ແລະບາດແຜຕ່າງໆໄດ້ ຈັດເປັນພືດທີ່ອຸດົມໄປດ້ວຍສານທີ່ເປັນປະໂຫຍດຫຼາຍກວ່າ 200 ຊະນິດ ເຊັ່ນ: ວິຕາມິນ, ແຮ່ທາດ, ກົດອາມີໂນ, ເອັນໄຊ ແລະສານເຄມີອື່ນໆ ຊຶ່ງບຳລຸງໃຫ້ຮ່າງກາຍສົມບູນ ແລະແຂງແຮງ.

ຫວ້ານຫາງແຂ້ ແລະຜະລິດຕະພັນ ມີແຜ່ຫຼາຍໃນຕະຫຼາດໂລກມາດົນນານແລ້ວ ຜູ້ທີ່ຜະລິດທີ່ສຳຄັນໄດ້ແກ່ **ລັດເທັກຊັດ, ເມັກຊິໂກ, ອາເມລິກາໃຕ້, ເກາະຄາລະເບຍ** ຊຶ່ງຜະລິດຕະພັນຈາກຫວ້ານກຫາງແຂ້ນີ້ ມີຕັ້ງແຕ່ຜະລິດຕະພັນຄວບຄຸມນ້ຳໜັກ, ສານສະກັດຫວ້ານຫາງແຂ້, ເຄື່ອງດື່ມ, ຄຣີມບຳລຸງຜິວ, ເຈວລ້າງໜ້າ, ນ້ຳຢາສະຜົມ ແລະຄີມລະງັບອາການອັກເສບ ແລະອື່ນໆ.



## 3. ແນວພັນ

ຫວ້ານຫາງແຂ້ມີຫຼາຍກວ່າ 200 ຊະນິດພັນ, ໃນນັ້ນມີພຽງ 3 ຫຼື 4 ຊະນິດທີ່ມີຊັບພະຄຸນທາງການແພດ, ໃນຈຳນວນ 3 ຫຼື 4 ຊະນິດທີ່ກ່າວມາຂ້າງເທິງມີ ຫວ້ານຫາງແຂ້ Aloe Vera Barbadenis (Miller) ຫຼືເອີ້ນອີກຢ່າໜຶ່ງວ່າ: Aloe Vera (Linne).

## 4. ອາກາດ ແລະດິນ

ຫວ້ານຫາງແຂ້ຈະເລີນເຕີບໂຕໄດ້ດີທີ່ສຸດ ໃນສະພາບອາກາດຮ້ອນຊຸ່ມ ແຕ່ວ່າບໍ່ໃຫ້ມີຄວາມຊຸ່ມສູງເກີນໄປ, ຫວ້ານຫາງແຂ້ມັກອາກາດຮ້ອນ ຊຶ່ງຕ້ອງການ ອຸນຫະພູມປະມານ 45 ອົງສາຟາເລັນຮາຍ (F), ຕົ້ນທີ່ໃຫຍ່ຈະທົນທານຕໍ່ແສງແດດກ້າປະມານເຄິ່ງມື້ ແຕ່ສຳລັບຕົ້ນນ້ອຍຄວນປູກໃນຮົ່ມ, ສຳລັບຕົ້ນທີ່ສົມບູນສາມາດຄົງໂຕຢູ່ໄດ້ໃນສະພາບເງື່ອນໄຂດິນບໍ່ອຸດົມສົມບູນ, ຫວ້ານຫາງແຂ້ມັກອາກາດແຫ້ງແລ້ງ ແລະດິນທີ່ລະບານ້ຳໄດ້ດີ ບ່ອນທີ່ມີສະພາບອາກາດເໝາະສົມ ຄວນປູກຢູ່ກາງແຈ້ງ ຫຼືບໍ່ດັ່ງນັ້ນກໍ່ໃຫ້ປູກໃນກະໂຖ. ຫວ້ານຫາງແຂ້ມີສານເຄມີແບບພິເສດສະເພາະໂຕເພື່ອປັບຕົວເຂົ້າກັບສະພາບແວດລ້ອມຂອງມັນໃຫ້ໄດ້ດີ.

## 5. ວິທີການຫວ່ານກ້າ

ຄວນຫວ່ານແກ່ນຫວ້ານຫາງແຂ້ ໃນຊ່ວງຕົ້ນລະດູແລ້ງ ປູກຢູ່ໃນໂຖ ຫຼືດິນທີ່ລະບາຍນ້ຳໄດ້ດີ ຊຶ່ງເປັນດິນຕົມປົນສົມຊາຍ, ຫົດນ້ຳເປັນປົກກະຕິ ແຕ່ວ່າບໍ່ຫົດຫຼາຍເກີນໄປ. ວິທີໜຶ່ງອີກເຮົາສາມາດປູກຫວ້ານຫາງແຂ້ດ້ວຍໜໍ່ (ແໜງ) ທີ່ຢູ່ອ້ອມຂ້າງຂອງຕົ້ນ.